ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຜນການ ແລະການລົງທຶນ

ຫ້ອງການ

ກະຊວງໂຍທາທິການ ແລະ ຂົນສົ່ງ
ຂາເຂົ້າ ເລກທີ 19810
ວັນທີ 31 ສິງຫາ 2018

ເລກທີ ໒໐໖໖ /ກຜທ.ຣມສ.ອອ.05

ນະຄອນຫຼວງວຽງຈັນ, ວັນທີ: ໒໙ ສິງຫາ ໒໐໑໘

ຮຽນ:
- ທ່ານ ຫົວໜ້າຫ້ອງການ, ກະຊວງການຕ່າງປະເທດ;
- ທ່ານ ຫົວໜ້າຫ້ອງການ, ກະຊວງອຸດສາກະກຳ ແລະ ການຄ້າ;
- ທ່ານ ຫົວໜ້າຫ້ອງການ, ກະຊວງປ້ອງກັນປະເທດ;
- ທ່ານ ຫົວໜ້າຫ້ອງການ, ກະຊວງການເງິນ;
- ທ່ານ ຫົວໜ້າຫ້ອງການ, ກະຊວງພະລັງງານ ແລະ ບໍ່ແຮ່;
- ທ່ານ ຫົວໜ້າຫ້ອງການ, ກະຊວງສຶກສາທິການ ແລະ ກິລາ;
- ທ່ານ ຫົວໜ້າຫ້ອງການ, ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ສື່ສານ;
- ທ່ານ ຫົວໜ້າຫ້ອງການ, ກະຊວງວິທະຍາສາດ ແລະ ເທັກໂນໂລຊີ;
- ທ່ານ ຫົວໜ້າຫ້ອງການ, ກະຊວງສາທາລະນະສຸກ;
- ທ່ານ ຫົວໜ້າຫ້ອງການ, ກະຊວງຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ;
- ທ່ານ ຫົວໜ້າຫ້ອງການ, ກະຊວງຍຸຕິທຳ;
- ທ່ານ ຫົວໜ້າຫ້ອງການ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
- ທ່ານ ຫົວໜ້າຫ້ອງການ, ກະຊວງໂຍທາທິການ ແລະ ຂົນສົ່ງ;
- ທ່ານ ຫົວໜ້າຫ້ອງການ, ທະນາຄານ ແຫ່ງ ສປປ ລາວ;
- ທ່ານ ຫົວໜ້າຫ້ອງວ່າການປົກຄອງນະຄອນຫຼວງວຽງຈັນ;
- ທ່ານ ເລຂາທິການ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງ ຊາດ;

ເລື່ອງ: ແຈ້ງໃຫ້ຊາບກ່ຽວກັບປະທານຄະນະກຳມາທິການ ຮ່ວມມືດ້ານເສດຖະກິດ-ການຄ້າ ແລະ ວິທະຍາສາດເຕັກນິກ ລາວ-ຣັດເຊຍ ຄົນໃໝ່.

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ແຫ່ງ ສປປລາວ ວ່າດ້ວຍການແຕ່ງຕັ້ງຄະນະກຳມາທິການຮ່ວມມືດ້ານເສດຖະກິດ-ການຄ້າ ແລະ ວິທະຍາສາດ-ເຕັກນິກ ລາວ-ຣັດເຊຍ ແລະ ເບລາຣຸດສ໌, ສະບັບເລກທີ 41/ນຍ ແລະ ສະບັບເລກທີ 42/ນຍ, ລົງວັນທີ 06 ມິຖຸນາ 2016;
- ອີງຕາມໜັງສືຈາກສະເອກອັກຄະລັດຖະທູດ ຣັດເຊຍ ປະຈຳ ສປປ ລາວ ສະບັບເລກທີ 151/ກ, ລົງວັນທີ 17 ກໍລະກົດ 2018.

- ອີງຕາມໜັງສືຈາກ ກະຊວງການຕ່າງປະເທດ ສະບັບເລກທີ 2288/ຫກ.ກອອ, ລົງວັນທີ 19 ກໍລະກົດ 2018

ຫ້ອງການ, ກະຊວງແຜນການ ແລະ ການລົງທຶນ ຂໍຖືເປັນກຽດຮຽນມາຍັງທ່ານຊາບວ່າ ພາຍຫລັງ ສາທາລະນະລັດ ສະຫະພັນ ຣັດເຊຍ ໄດ້ມີການເລືອກຕັ້ງ ແລະ ປັບປຸງ ຄະນະລັດຖະບານຊຸດໃໝ່ ຊຶ່ງໄດ້ມີການ ປ່ຽນແປງປະທານຄະນະກຳມາທິການຮ່ວມມື ດ້ານເສດຖະກິດ-ການຄ້າ ແລະ ວິທະຍາສາດ-ເຕັກນິກ ຣັດເຊຍ-ລາວ ໂດຍແຕ່ງຕັ້ງ ທ່ານ Konstantin NOSKOV, ລັດຖະມົນຕີ ກະຊວງ ພັດທະນາລະບົບດີຈີຕອນ, ໂທລະ ຄົມມະນາຄົມ ແລະ ການສື່ສານມວນຊົນ ແຫ່ງ ສາທາລະນະລັດ ສະຫະພັນ ຣັດເຊຍ ເປັນປະທານຄະນະກຳມາທິ ການຮ່ວມມື ດ້ານເສດຖະກິດ-ການຄ້າ ແລະ ວິທະຍາສາດ-ເຕັກນິກ ຣັດເຊຍ-ລາວ ຄົນໃໝ່ ຕາມທີ່ໄດ້ຮັບໜັງສື ຈາກສະຖານທູດຣັດເຊຍ ປະຈຳ ສປປ ລາວ ສະບັບເລກທີ 151/n, ລົງວັນທີ 17 ກໍລະກົດ 2018.

ດັ່ງນັ້ນ, ຈຶ່ງຂໍຖືເປັນກຽດຮຽນມາຍັງທ່ານເພື່ອຊາບ ຕາມທາງຄວນດ້ວຍ.

**ຫົວໜ້າຫ້ອງການ**

ພອງສະມຸດ ຄຳວານວົງສາ

**ຜູ້ປະສານງານ**: ທ.ເກດທິສັກ ຂັນທະວົງ
Tel & Fax: 021 222549
Mobile: 020 2221 5586, 030 7774474
E-mail: kethtisak.dic@gmail.com